# ການວິເຄາະບັນຫາຂອງປະເທດຢາງເປັນລະບົບ ສປປ ລາວ, 2021 | ພາກສະຫລຸບໂດຍສັງເຂບ

## Systematic Country Diagnostic Lao PDR, 2021 Update | Executive Summary









THE WORLD BANK
IBRD • IDA | WORLD BANK GROUP

© 2022 International Bank for Reconstruction and Development / The World Bank 1818 H Street NW, Washington, DC 20433
Telephone: 202-473-1000; Internet: www.worldbank.org

Some rights reserved.

This work is a product of the staff of the World Bank with external contributions. The findings, interpretations, and conclusions expressed in this work do not necessarily reflect the views of the World Bank, its Board of Executive Directors, or the governments they represent. The World Bank does not guarantee the accuracy of the data included in this work. The boundaries, colors, denominations, and other information shown on any map in this work do not imply any judgment on the part of The World Bank concerning the legal status of any territory or the endorsement or acceptance of such boundaries.

Nothing herein shall constitute or be considered a limitation upon or waiver of the privileges and immunities of the World Bank, all of which are specifically reserved.

**Rights and Permissions**

This work is available under the Creative Commons Attribution 3.0 IGO license (CC BY 3.0 IGO) http://creativecommons.org/licenses/by/3.0/igo. Under the Creative Commons Attribution license, you are free to copy, distribute, transmit, and adapt this work, including for commercial purposes, under the following conditions:

**Attribution—**Please cite the work as follows: World Bank. 2022. Lao People's Democratic Republic Systematic Country Diagnostic: 2021 Update. Washington, DC: World Bank. License: Creative Commons Attribution CC BY 3.0 IGO

**Translations—**If you create a translation of this work, please add the following disclaimer along with the attribution: This translation was not created by the World Bank and should not be considered an official World Bank translation. The World Bank shall not be liable for any content or error in this translation.

Adaptations—If you create an adaptation of this work, please add the following disclaimer along with the attribution: This is an adaptation of an original work by The World Bank. Views and opinions expressed in the adaptation are the sole responsibility of the author or authors of the adaptation and are not endorsed by the World Bank.

**Third-party content—**The World Bank does not necessarily own each component of the content contained within the work. The World Bank therefore does not warrant that the use of any third-party owned individual component or part contained in the work will not infringe on the rights of those third parties. The risk of claims resulting from such infringement rests solely with you. If you wish to re-use a component of the work, it is your responsibility to determine whether permission is needed for that re-use and to obtain permission from the copyright owner. Examples of components can include, but are not limited to, tables, figures, or images.

All queries on rights and licenses should be addressed to World Bank Publications, The World Bank Group, 1818 H Street NW, Washington, DC 20433, USA; e-mail: pubrights@worldbank.org.

**Design, layout, and cover illustration:** Paul Bloxham Design.

# ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ ສປປ ລາວ, 2021 | ພາກສະຫລຸບໂດຍສັງເຂບ



# ພາກສະຫລຸບໂດຍສັງເຂບ

**ການວິເຄາະບັນຫາຂອງປະເທດຢ່າງເປັນລະບົບ (Systematic Country Diagnostic ຫຼື SCD) ຄັ້ງນີ້ແມ່ນການປັບປຸງວຽກງານການວິເຄາະຂອງ SCD ໃນປີ 2017 ໂດຍອີງຕາມຂໍ້ມູນຫຼັກຖານໃໝ່ ໆ**. ໃນປີ 2017, ກຸ່ມທະນາຄານໂລກ (World Bank Group ຫຼື WBG) ໄດ້ພິມເຜີຍແຜ່ບົດ SCD ສະບັບທໍາອິດສໍາລັບ ສປປ ລາວເຊິ່ງ ໄດ້ປະເມີນຄວາມຫຍຸ້ງຍາກທີ່ກີດຂວາງການເຕີບໂຕດ້ານເສດຖະກິດ, ການມີສ່ວນຮ່ວມແລະໄດ້ຮັບຜົນປະໂຫຍດຈາກການພັດທະນາ ແລະ ຄວາມຍືນຍົງ. ບົດ SCD ຄັ້ງນີ້ ນໍາໃຊ້ຂໍ້ມູນຫຼັກຖານໃໝ່ ໆ ເພື່ອອະທິບາຍການພັດທະນາຕັ້ງແຕ່ປີ 2017 ເປັນຕົ້ນມາ, ປະເມີນຄືນຄວາມສອດຄ່ອງຂອງບັນດາຂໍ້ແນະນໍາທີ່ໄດ້ສະເຫນີກ່ອນໜ້ານີ້ ແລະ ບູລິມະສິດໃນຕໍ່ຫນ້າ ເພື່ອບັນລຸສອງເປົ້າໝາຍຂອງການ ຢຸດຕິຄວາມທຸກຍາກຮ້າຍແຮງ ແລະ ສົ່ງເສີມການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ພ້ອມທັງປັບປຸງຂໍ້ມູນຄວາມຮູ້ໃໝ່ ໆ ເຂົ້າຕື່ມ ແລະ ອະທິບາຍຊ່ອງຫວ່າງດ້ານຂໍ້ມູນ. ການວິເຄາະຄັ້ງນີ້ ໄດ້ລົງເລິກເຖິງ ສິ່ງທ້າທາຍທີ່ຮີບດ່ວນທີ່ສຸດສໍາລັບ ສປປ ລາວ ບົນພື້ນຖານການນໍາໃຊ້ຂໍ້ມູນໃຫມ່ ພ້ອມກັນນັ້ນ ກໍວິເຄາະໃຫ້ເຫັນກາລະໂອກາດໃໝ່ ໆ .

**ຂໍ້ມູນຫຼັກຖານໃໝ່ໃນຫວ່າງບໍ່ດົນມານີ້ ຊີ້ແຈງໃຫ້ຮູ້ວ່າ ຄວາມທຸກຍາກໄດ້ຫລຸດລົງ ແຕ່ວ່າ ຄວາມບໍ່ສະເໝີພາບໃນດ້ານລາຍໄດ້ນັ້ນສືບຕໍ່ເພີ່ມຂຶ້ນ.** ເສດຖະກິດໄດ້ສືບຕໍ່ຂະຫຍາຍໂຕຢ່າງເຂັ້ມແຂງລະຫວ່າງປີ 2017 ຫາປີ 2019 ໂດຍສະເລ່ຍ 6,2 ສ່ວນຮ້ອຍຕໍ່ປີ ເຖິງແມ່ນວ່າຈະຂະຫຍາຍໃນຈັງຫວະຊ້າກວ່າເກົ່າໃນສາມປີກ່ອນຫນ້ານີ້ກໍຕາມ. ການເຕີບໂຕດ້ານເສດຖະກິດໄດ້ຫລຸດລົງຢ່າງກ້າວກະໂດດລົງມາທີ່ 0,5 ສ່ວນຮ້ອຍໃນປີ 2020 ຍ້ອນຜົນກະທົບຈາກການລະບາດຂອງພະຍາດ COVID-19. ອັດຕາຄວາມທຸກຍາກແຫ່ງຊາດໄດ້ຫລຸດລົງຈາກ 24,6 ສ່ວນຮ້ອຍໃນປີ 2012 ມາເປັນ 18,3 ສ່ວນຮ້ອຍໃນປີ 2018. ລະດັບມາດຕະຖານການດໍາລົງຊີວິດກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ ອັນພົ້ນເດັ່ນແມ່ນ ຜົນຮັບໃນການເຂົ້າເຖິງການບໍລິການພື້ນຖານ, ການສຶກສາ ແລະ ສາທາລະນະສຸກ. ເຖິງແນວໃດກໍຕາມ, ອັດຕາຄວາມທຸກຍາກກໍຍັງສືບຕໍ່ສູງເມື່ອສົມທຽບໃສ່ປະເທດອ້ອມຂ້າງໃນພາກພື້ນ ແລະ ໂດຍສະເພາະໃນກຸ່ມກະສິກອນທີ່ປູກຝັງເພື່ອກຸ້ມຢູ່ກຸ້ມກິນ ແລະ ກຸ່ມຊົນເຜົ່າທີ່ເວົ້າພາສາຊົນເຜົ່າ. ຄວາມບໍ່ສະເໝີພາບສືບຕໍ່ເພີ່ມຂຶ້ນ ຍ້ອນວ່າ ການເຕີບໂຕໃນຈັງຫວະທີ່ວ່ອງໄວ ບໍ່ໄດ້ສ້າງວຽກເຮັດງານທໍາຫລາຍຢ່າງສົມສ່ວນ. ດັດສະນີ ຈີນີ (Gini index) ໄດ້ເພີ່ມຂຶ້ນຈາກ 36,0 ມາເປັນ 38,8 ລະຫວ່າງປີ 2012 ຫາ 2018, ແລະການແບ່ງປັນຄວາມອຸດົມຮັ່ງມີກໍມີຄວາມຖົດຖອຍ (ເຊິ່ງສະແດງອອກໃນການບໍລິໂພກຕໍ່ຫົວຄົນ ໃນກຸ່ມຄົນທຸກຍາກທີ່ສຸດ 40 ສ່ວນຮ້ອຍຂອງປະຊາກອນ ແມ່ນໄດ້ເພີ່ມຂຶ້ນພຽງແຕ່ 1,9 ສ່ວນຮ້ອຍຕໍ່ປີ ສົມທຽບໃສ່ 3,3 ສ່ວນຮ້ອຍສະເລ່ຍສໍາລັບປະຊາກອນທັງໝົດ.

**ສປປ ລາວ ໄດ້ມີຄວາມຄືບໜ້າຫລາຍດ້ານໃນການພັດທະນາ, ແຕ່ວ່າ ສິ່ງທ້າທາຍຈໍານວນໜຶ່ງກໍໄດ້ ພົ້ນເດັ່ນຂຶ້ນກວ່າເກົ່າຕັ້ງແຕ່ປີ 2017 ເປັນຕົ້ນມາ ແລະ ໄດ້ ທະວີຄູນຍິ່ງຂຶ້ນຍ້ອນການລະບາດຂອງພະຍາດ COVID-19.** ຄວາມສ່ຽງຫຼັກ ໆ ທີ່ໄດ້ລະບຸໃນບົດ SCD ປີ 2017 ມີຄື: ຄວາມສ່ຽງດ້ານສະເຖຍລະພາບຂອງເສດຖະກິດມະຫາພາກ, ການເຕີບໂຕແບບສົມບູນແລະມີສ່ວນຮ່ວມ ແລະ ການຊຸດໂຊມຂອງສິ່ງແວດລ້ອມນັ້ນ ໄດ້ປະກົດຜົນເປັນຈິງ. ຄວາມບອບບາງຂອງເສດຖະກິດມະຫາພາກໄດ້ເພີ່ມທະວີຂຶ້ນ ໂດຍສະເພາະຍ້ອນ ພາລະແບກຫາບຈາກໜີ້ສິນຂອງລັດທີ່ບໍ່ຍືນຍົງ ສ້າງຄວາມຫຍຸ້ງຍາກໃຫ້ແກ່ງົບປະມານແລະການດໍາເນີນນະໂຍບາຍການເງິນຂອງລັດຖະບານ, ສ້າງຄວາມກົດດັນຕໍ່ອັດຕາແລກປ່ຽນເງິນຕາ ແລະ ເປັນໄພຕໍ່ສະເຖຍລະພາບຂອງຂະແໜງການທະນາຄານ.ໃນຂະນະທີ່ການເຕີບໂຕດ້ານເສດຖະກິດໄດ້ມີຄວາມເຂັ້ມແຂງກ່ອນໄລຍະການລະບາດພະຍາດ COVID-19 ນັ້ນ, ຫຼັກຖານໃໝ່ໃນຫວ່າງບໍ່ດົນມານີ້ ໄດ້ສະແດງໃຫ້ຮູ້ວ່າການເຕີບໂຕສ່ວນໃຫຍ່ແມ່ນບໍ່ໄດ້ສ້າງວຽກເຮັດງານທໍາຫລາຍ. ຄວາມກັງວົນດ້ານສິ່ງແວດລ້ອມ ແລະ ຄວາມບອບບາງຕໍ່ວິກິດການ/ຜົນກະທົບແບບກະທັນຫັນ ກໍໄດ້ເພີ່ມຂຶ້ນ ຍ້ອນຄວາມສ່ຽງທີ່ຕິດພັນກັບສະພາບດິນຟ້າອາກາດ ແລະ ຄວາມຊຸດໂຊມດ້ານສິ່ງແວດລ້ອມທີ່ເກີດຈາກປັດໃຈທໍາມະຊາດ ແລະ ມະນຸດ. ຜົນກະທົບຂອງ COVID-19 ໄດ້ເຮັດໃຫ້ສິ່ງທ້າທາຍເຫຼົ່ານີ້ ຍິ່ງຖ່ວງດຶງ ການເຕີບໂຕດ້ານເສດຖະກິດທີ່ຍືນຍົງ, ສົມບູນ ແລະ ທົນທານ.

**ລະດັບໜີ້ສິນສາທາລະນະທີ່ສູງ ໄດ້ເຮັດໃຫ້ເສດຖະກິດມະຫາພາກຂາດສະເຖຍລະພາບ ແລະ ບັ່ນທອນທ່າແຮງໃນການພັດທະນາ.** ສປປ ລາວ ປະເຊີນກັບຄວາມທ້າທາຍດ້ານສະພາບຄ່ອງ ແລະ ຄວາມສາມາດໃນການຊຳລະໜີ້ສິນ ຍ້ອນ ໜີ້ສິນທີ່ສູງ, ການເກັບລາຍຮັບບໍ່ໄດ້ດີເທົ່າທີ່ຄວນ, ທາງເລືອກດ້ານການເງິນທີ່ມີຈຳກັດ, ແລະ ຄັງສຳຮອງເງິນຕາຕ່າງປະເທດທີ່ຕ່ຳ ເຊິ່ງໄດ້ເຮັດໃຫ້ ສປປ ລາວ ຕົກຢູ່ໃນສະພາບຫຍຸ້ງຍາກດ້ານໜີ້ສິນ. ໜີ້ສິນສາທາລະນະ ແລະ ໜີ້ສິນທີ່ລັດຄ້ຳປະກັນ ແມ່ນກວມເອົາປະມານ 89 ສ່ວນຮ້ອຍຂອງ GDP ໃນປີ 2021 ເຊິ່ງເປັນໜຶ່ງໃນອັດຕາທີ່ສູງທີ່ສຸດໃນພາກພື້ນ. ພັນທະດ້ານການຊຳລະໜີ້ສິນທີ່ສູງ ໄດ້ປະກອບສ່ວນເຮັດໃຫ້ອັດຕາແລກປ່ຽນຂອງເງິນກີບອ່ອນຄ່າຢ່າງວ່ອງໄວໃນປີ 2021 ເຊິ່ງຍິ່ງເພີ່ມທະວີພັນທະການແບກຫາບໜີ້ສິນຕ່າງປະເທດ. ໜີ້ສິນສາທາລະນະຍິ່ງເຮັດໃຫ້ຂະແໜງການເງິນທີ່ອ່ອນແອຢູ່ແລ້ວ ຍິ່ງບອບບາງຫຼາຍຂຶ້ນອີກ ສ່ວນໜຶ່ງກໍຍ້ອນຄວາມກ່ຽວຂ້ອງຂອງທະນາຄານທຸລະກິດລັດ ຕໍ່ໜີ້ສິນລັດຖະບານ. ໜີ້ສິນທີ່ເພີ່ມຂຶ້ນ ໄດ້ຫລຸດກຳລັງການລົງທຶນຂອງພາກລັດເຂົ້າໃນວຽກງານດ້ານສັງຄົມ. ລາຍຈ່າຍຂອງລັດຖະບານໃສ່ຂະແໜງສາທາລະນະສຸກ ແລະ ການສຶກສາໄດ້ຫລຸດລົງຈາກປະມານ 4,4 ເປັນ 3,1 ສ່ວນຮ້ອຍຂອງ GDP ລະຫວ່າງປີ 2016 ເຖິງ 2021 ເຊິ່ງໄດ້ຖ່ວງດຶງ ການສະໜອງການບໍລິການພາກລັດ. ຄຽງຄູ່ກັບລາຍຮັບທີ່ຄ່ອຍ ໆ ຫລຸດລົງໃນຊຸມປີຜ່ານມາ, ນະໂຍບາຍການປະຢັດລາຍຈ່າຍ ບວກກັບການຊຳລະດອກເບ້ຍທີ່ນັບມື້ເພີ່ມສູງຂຶ້ນ ໄດ້ຈຳກັດງົບປະມານລາຍຈ່າຍຂອງລັດຖະບານເຂົ້າໃນການພັດທະນາທີ່ສຳຄັນລວມທັງວຽກງານສາທາລະນະສຸກ ແລະ ການສຶກສາ. ສະນັ້ນ ຈຶ່ງມີຄວາມຈຳເປັນຕ້ອງດຸ່ນດ່ຽງ ການຄຸ້ມຄອງໜີ້ສິນ ແລະ ນະໂຍບາຍດ້ານການເງິນ ກັບລາຍຈ່າຍສຳຄັນຂອງພາກລັດ ເພື່ອການເຕີບໂຕດ້ານເສດຖະກິດໃນໄລຍະຍາວ.

**ຮູບແບບການເຕີບໂຕຂອງເສດຖະກິດໃນປັດຈຸບັນສະແດງໃຫ້ເຫັນເຖິງຂໍ້ຈຳກັດ ໂດຍສະເພາະ ການສ້າງວຽກເຮັດງານທຳທີ່ຈຳກັດ.** ເຖິງແມ່ນວ່າອັດຕາການເຕີບໂຕຂອງ GDP ໂດຍສະເລ່ຍແມ່ນ 7 ສ່ວນຮ້ອຍລະຫວ່າງປີ 2003–2019, ແຕ່ຈັງຫວະການຂະຫຍາຍຕົວກໍໄດ້ຫລຸດລົງກ່ອນໄລຍະ COVID-19 ແລ້ວຈາກ 8 ສ່ວນຮ້ອຍໃນປີ 2013 ມາເປັນ 5,5 ສ່ວນຮ້ອຍໃນປີ 2019. ແນວໂນ້ມດັ່ງກ່າວສະແດງໃຫ້ເຫັນເຖິງຂໍ້ຈຳກັດຂອງຮູບແບບການເຕີບໂຕທີ່ອີງໃສ່ຂະແໜງການທີ່ເນັ້ນທຶນສູງ, ຂັບເຄື່ອນໂດຍຊັບພະຍາກອນທຳມະຊາດ ແລະ ມີແຫລ່ງທຶນຈາກການກູ້ຢືມເປັນຫຼັກ. ການພັດທະນາພາກເອກະຊົນພາຍໃນປະເທດກໍຖືກຖ່ວງດຶງດ້ວຍ ສະພາບແວດລ້ອມການດຳເນີນທຸລະກິດທີ່ບໍ່ເອື້ອອຳນວຍ ໂດຍສະເພາະການຂາດການແຂ່ງຂັນ ແລະ ຄວາມໂປ່ງໃສ. ໃນຂະແໜງການເງິນ ແມ່ນທະນາຄານທຸລະກິດລັດຄອບຄອງສ່ວນແບ່ງຕະຫລາດເປັນສ່ວນຫລາຍ ແລະ ໃຫ້ການປ່ອຍສິນເຊື່ອໃຫ້ພາກເອກະຊົນມີຄວາມຈຳກັດສ່ວນຫນຶ່ງແມ່ນຍ້ອນຄວາມຕ້ອງການແຫລ່ງທຶນຂອງລັດຖະບານທີ່ສູງເພື່ອມາດຸ່ນດ່ຽງງົບປະມານແລະຊຳລະຫນີ້ສິນ. ການເຕີບໂຕດ້ານເສດຖະກິດກໍບໍ່ໄດ້ສ້າງວຽກເຮັດງານທຳຫລາຍ ແລະ ອັດຕາຫວ່າງງານກໍເພີ່ມຈາກ 4,1 ເປັນ 15,7 ສ່ວນຮ້ອຍໃນໄລຍະປີ 2012–2018 ໃນຂະນະທີ່ຄວາມບໍ່ສະເໝີພາບກໍໄດ້ເພີ່ມຂຶ້ນ. ການເຄື່ອນຍ້າຍແຮງງານກໍໄດ້ເພີ່ມຂຶ້ນໃນທົດສະວັດຜ່ານມາໂດຍເພີ່ມຂຶ້ນຢ່າງກ້າວກະໂດດຕັ້ງແຕ່ປີ 2015 ເປັນຕົ້ນມາ ໂດຍສະເພາະໃນແຂວງທີ່ມີການຈ້າງງານໃນຂະແໜງການທີ່ບໍ່ແມ່ນກະສິກຳ ຫລຸດລົງຢ່າງຫຼວງຫຼາຍ. ລາຍໄດ້ເຂົ້າປະເທດຈາກແຮງງານລາວຢູ່ຕ່າງປະເທດໄດ້ຊ່ວຍຊົດເຊີຍການສູນເສຍລາຍຮັບຈາກການຫລຸດລົງຂອງການຈ້າງງານໃນຂະແໜງອື່ນທີ່ບໍ່ແມ່ນກະສິກຳ. ໃນຕໍ່ໜ້າ ຮູບແບບການຂະຫຍາຍຕົວຂອງເສດຖະກິດຈຳເປັນຕ້ອງມີຄວາມສົມດຸນ ແລະ ມີສ່ວນຮ່ວມກວ່າເກົ່າເພື່ອປັບປຸງຜົນໄດ້ຮັບຈາກການພັດທະນາ.

**ການບົກແຫ້ງຂອງຄັງທຶນທຳມະຊາດ ແລະ ຄວາມບອບບາງສູງຕໍ່ວິກິດການ ໄດ້ສ້າງຄວາມກັງວົນກ່ຽວກັບຄວາມຍືນຍົງ.** ການເຕີບໂຕດ້ານເສດຖະກິດໄດ້ອີງໃສ່ ຊັບພະຍາກອນທຳມະຊາດເປັນຫຼັກ ໂດຍສະເພາະ ບໍ່ແຮ່, ການຜະລິດພະລັງງານໄຟຟ້ານ້ຳຕົກ ແລະ ການຜະລິດກະສິກຳ. ອັນນີ້ ໄດ້ເຮັດໃຫ້ຊັບພະຍາກອນທຳມະຊາດບົກແຫ້ງລົງ ແລະ ສິ່ງແວດລ້ອມຊຸດໂຊມລົງ ໃນຂະນະທີ່ປະກອບສ່ວນສ້າງຄວາມກົດດັນທາງສັງຄົມ.ລະດັບແມ່ນ້ຳຂອງກໍຫລຸດລົງເຖິງລະດັບຕ່ຳທີ່ສຸດເທົ່າທີ່ເຄີຍມີມາໃນປີ 2020 ຍ້ອນຝົນຕົກໜ້ອຍລົງ ແລະ ການດຳເນີນງານຂອງເຂື່ອນພະລັງງານໄຟຟ້ານ້ຳຕົກ. ໃນປີ 2018, ກໍລະນີເຂື່ອນແຕກຢູ່ແຂວງອັດຕະປື ໄດ້ເຮັດໃຫ້ມີນ້ຳຖ້ວມທີ່ຮ້າຍແຮງທີ່ສຸດໃນຮອບຫຼາຍທົດສະວັດ ເຮັດໃຫ້ປະຊາຊົນຫຼາຍກວ່າ 6.000 ຄົນ ສູນເສຍທີ່ພັກອາໃສ.

ນອກຈາກໄພພິບັດທຳມະຊາດ, ຄວາມຄືບໜ້າດ້ານການພັດທະນາແມ່ນມີຄວາມບອບບາງສູງຕໍ່ ວິກິດການດ້ານສາທາລະນະສຸກ (ເຊັ່ນ ໂລກລະບາດ) ແລະ ວິກິດການດ້ານເສດຖະກິດ (ເຊັ່ນ: ການຂຶ້ນ ໆ ລົງ ໆ ຂອງລາຄາສິນຄ້າ ແລະ ການອ່ອນຄ່າຂອງອັດຕາແລກປ່ຽນ). ສະນັ້ນ ການພັດທະນາເສດຖະກິດຈຳເປັນຕ້ອງມີຮູບແບບການເຕີບໂຕທີ່ຍືນຍົງ, ສີຂຽວ ແລະ ທົນທານກວ່າເກົ່າ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດຈາກການພັດທະນາທີ່ຄົບຖ້ວນ-ສົມບູນ-ກວມລວມ.

**ຜົນກະທົບຈາກການລະບາດຂອງພະຍາດ COVID-19 ໄດ້ກໍ່ໃຫ້ເກີດວິກິດທີ່ບໍ່ເຄີຍມີມາກ່ອນ ແລະ ຜົນກະທົບແບບຕ່ອງໂສ້ກວ້າງຂວາງຕໍ່ຄົວເຮືອນ ແລະ ຫົວໜ່ວຍທຸລະກິດ.** ເຖິງແມ່ນວ່າພະຍາດ COVID-19 ໄດ້ຖືກປະກາດເປັນວິກິດການດ້ານສາທາລະນະສຸກ, ແຕ່ຜົນກະທົບມີຫລາຍດ້ານ. ສປປ ລາວ ໄດ້ປະສົບຜົນສຳເລັດເປັນສ່ວນໃຫຍ່ໃນການຄວບຄຸມການລະບາດຂອງເຊື້ອພະຍາດ, ແຕ່ວ່າ ການລະບາດ ແລະ ມາດຕະການຮັບມືໄດ້ສົ່ງຜົນກະທົບດ້ານເສດຖະກິດຕໍ່ຄົວເຮືອນ ແລະ ຫົວໜ່ວຍທຸລະກິດ ໂດຍສະເພາະ ກຸ່ມທີ່ບອບບາງ. ການລະບາດໄດ້ສົ່ງຜົນກະທົບໃຫຍ່ຫຼວງຕໍ່ການດຳເນີນທຸລະກິດ ໂດຍມີທຸລະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບຜົນກະທົບຫຼາຍທີ່ສຸດ. ນອກຈາກນັ້ນ, ການລະບາດພະຍາດຄັ້ງນີ້ຍັງໄດ້ເຮັດໃຫ້ບັນຫາດ້ານໂຄງສ້າງໃນຕະຫຼາດແຮງງານທີ່ມີຢູ່ແລ້ວ ຍິ່ງຮ້າຍແຮງຂຶ້ນຕື່ມ ໂດຍອັດຕາການຫວ່າງງານຄາດວ່າ ໄດ້ເພີ່ມຂຶ້ນເຖິງປະມານ 23,4 ສ່ວນຮ້ອຍໃນປີ 2020 ທ່າມກາງການລະບາດຂອງພະຍາດດັ່ງກ່າວ. ແຮງງານເຄື່ອນຍ້າຍທີ່ຕ້ອງໄດ້ກັບຄືນມາ ສປປ ລາວ ໄດ້ເຮັດໃຫ້ສູນເສຍລາຍໄດ້ຈາກການເຮັດວຽກຢູ່ຕ່າງປະເທດ. ຜົນກະທົບຕໍ່ ຕ່ອງໂສ້ການສະໜອງ ແລະ ການອ່ອນຄ່າຂອງອັດຕາແລກປ່ຽນເງິນຕາ ໄດ້ດັນລາຄາໃຫ້ສູງຂຶ້ນ. ການຫລຸດລົງຂອງລາຍຮັບຍ້ອນພະຍາດ COVID-19 ແລະ ຄ່າຄອງຊີບທີ່ເພີ່ມຂຶ້ນ ໄດ້ກະທົບຄົວເຮືອນທີ່ບອບບາງ. ການລະບາດພະຍາດດັ່ງກ່າວຍັງໄດ້ສະທ້ອນໃຫ້ເຫັນຄວາມອ່ອນແອຂອງລະບົບສາທາລະນະສຸກ, ການສຶກສາ ແລະ ການປະກັນສັງຄົມ. ແຮງງານນອກລະບົບ ແມ່ນບໍ່ໄດ້ຮັບການປົກປ້ອງຢ່າງພຽງພໍ ຈາກການສູນເສຍວຽກເຮັດງານທຳຍ້ອນພະຍາດໂຄວິດ ໃນຂະນະທີ່ ການສູນເສຍດ້ານການຮຽນຮູ້ຂອງນັກຮຽນທີ່ບໍ່ສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກໃນການຮຽນແບບທາງໄກ ນັ້ນຍິ່ງສູງກວ່າ. ຄວາມຈຳກັດດ້ານງົບປະມານໄດ້ ຈຳກັດຄວາມອາດສາມາດຂອງລັດຖະບານ ໃນການອອກມາດຕະການກະຕຸ້ນດ້ານການເງິນເພື່ອປົກປ້ອງຄົວເຮືອນ ແລະ ຫົວໜ່ວຍທຸລະກິດຈາກຜົນກະທົບຂອງ COVID-19. ໃນຕໍ່ໜ້າ, ນະໂຍບາຍເພື່ອປັບປຸງການສ້າງທຶນມະນຸດ ແລະ ສົ່ງເສີມການສ້າງວຽກເຮັດງານທຳໃນພາກເອກະຊົນຈຶ່ງຈຳເປັນຕ້ອງຄຳນຶງເຖິງ ຜົນເສຍຫາຍທີ່ເກີດຂຶ້ນຍ້ອນ COVID-19 ໂດຍສະເພາະທີ່ຕິດພັນກັບກຸ່ມທີ່ບອບບາງ.

**ສະພາບການໃນພາກພື້ນ ມີບົດບາດສຳຄັນໃນການສ້າງໂອກາດໃຫ້ ສປປ ລາວ ດ້ານການຄ້າ, ການລົງທຶນ ແລະ ການເຄື່ອນຍ້າຍແຮງງານ.** ການຄ້າໄດ້ເຕີບໂຕຢ່າງຫຼວງຫຼາຍໃນທົດສະວັດຜ່ານມາ. ປະເທດໄທ, ສປ ຈີນ ແລະ ຫວຽດນາມເປັນຕະຫຼາດສົ່ງອອກໃຫຍ່ທີ່ສຸດ ຂອງ ສປປ ລາວ ໂດຍສ່ວນຫລາຍເປັນການສົ່ງອອກສິນຄ້າວັດຖຸດິບ. ການສົ່ງອອກໄຟຟ້າໄປປະເທດ ໄທ ແມ່ນນັບມື້ມີຄວາມສຳຄັນ. ການລົງທຶນຕ່າງປະເທດ ກໍໄດ້ເພີ່ມຂຶ້ນໃນທົດສະວັດຜ່ານມາ ໂດຍສະເພາະ ພະລັງງານໄຟຟ້ານ້ຳຕົກ, ການຂົນສົ່ງ ແລະ ການຂຸດຄົ້ນບໍ່ແຮ່. ສປ ຈີນ, ໄທ, ສສ ຫວຽດນາມ ແລະ ຍີ່ປຸ່ນ ແມ່ນເປັນ ແຫຼ່ງຂອງການລົງທຶນຕ່າງປະເທດ (FDI) ທີ່ໃຫຍ່ທີ່ສຸດ ໂດຍ ສປ ຈີນ ກວມເອົາອັດຕາສ່ວນໃຫຍ່. ເສັ້ນທາງລົດໄຟລາວ-ຈີນ ເປັນການລົງທຶນທີ່ສຳຄັນໃສ່ການ ເຊື່ອມຕໍ່ພື້ນຖານໂຄງລ່າງໃນຂັ້ນພາກພື້ນ ໃນຂະນະທີ່ການເຊື່ອມຕໍ່ໃນຮູບແບບອື່ນກໍ່ໄດ້ເກີດຂຶ້ນເຊັ່ນ ການເຊື່ອມຕໍ່ດ້ານພະລັງງານຈາກຕະຫຼາດພາຍໃນ ເຖິງ ໄທ (ສາຍສົ່ງໄຟຟ້າ) ແລະ ຫວຽດນາມ (ແຜນການສ້າງເສັ້ນທາງດ່ວນວຽງຈັນ-ຮາໂນ້ຍ ແລະ ທ່າເຮືອວຸງອາງ). ການລົງທຶນໃນໂຄງການຂະໜາດໃຫຍ່ເຫຼົ່ານີ້ ໃຊ້ແຫລ່ງທຶນຈາກການກູ້ຢືມມະຫາສານໂດຍສະເພາະຈາກທະນາຄານຈີນ (ບາງຄັ້ງເປັນການຄ້ຳປະກັນຂອງພາກລັດ). ນອກຈາກນັ້ນກໍຍັງມີ ການເຄື່ອນຍ້າຍຂອງແຮງງານຈຳນວນຫລາຍໄປເຮັດວຽກຢູ່ປະເທດໄທ ທີ່ໄດ້ສ້າງລາຍຮັບກ່ອນໜ້າການລະບາດຂອງພະຍາດ COVID-19 ທີ່ໄດ້ສະໜັບສະໜູນ ເງິນໂອນເຂົ້າປະເທດຈາກແຮງງານລາວຢູ່ຕ່າງປະເທດ. ການຮ່ວມມືທາງເສດຖະກິດພາກພື້ນແບບຮອບດ້ານ (Regional Comprehensive Economic Partnership ຫຼື RCEP), ເຊິ່ງ ມີຜົນສັກສິດຕັ້ງແຕ່ເດືອນມັງກອນ 2022 ເປັນຕົ້ນມາ, ຈະເປີດໂອ

ກາດໃຫ້ຮັດແໜ້ນການເຊື່ອມໂຍງພາກພື້ນ. ການເຊື່ອມໂຍງ, ການຮ່ວມມື ແລະ ການປະສານງານພາກພື້ນຈຶ່ງມີຄວາມຈຳເປັນເພື່ອໃຫ້ນຳມາສູ່ຜົນປະໂຫຍດສູງສຸດຈາກໂອກາດທີ່ເກີດຂຶ້ນໃໝ່ ໆ .

**ບົດ SCD ສະບັບນີ້ ນຳສະເໜີ 3 ເສັ້ນທາງທີ່ຈະແກ້ໄຂບັນຫາເຄັ່ງຮ້ອນ ຕໍ່ການພັດທະນາ ຂອງ ສປປ ລາວ ເພື່ອຊຸກຍູ້ການຟື້ນຟູຢ່າງທົ່ວເຖິງ, ຍືນຍົງ ແລະ ທົນທານ ຈາກຜົນກະທົບຂອງພະຍາດ COVID-19.** ຂໍ້ມູນຫຼັກຖານໃໝ່ໃນຫວ່າງບໍ່ດົນມານີ້ ໄດ້ຊີ້ແຈງໃຫ້ຮູ້ວ່າ ຜົນຮັບດ້ານເສດຖະກິດສັງຄົມແມ່ນໄດ້ຮັບການປັບປຸງ ເຊັ່ນ ລະດັບລາຍໄດ້ສະເລ່ຍສູງຂຶ້ນ ແລະ ການຫລຸດຜ່ອນຄວາມທຸກຍາກ. ແຕ່ວ່າ, ກໍຍັງມີຄວາມຫຍຸ້ງຍາກອັນໃຫຍ່ຫລວງຕໍ່ການພັດທະນາທີ່ທົ່ວເຖິງ, ທົນທານ ແລະ ຍືນຍົງ. ເວົ້າສະເພາະ ແມ່ນມີ ສິ່ງທ້າທາຍສາມປະການທີ່ໄດ້ພົ້ນເດັ່ນຂຶ້ນຕັ້ງແຕ່ປີ 2017 ເປັນຕົ້ນມາ: (i) ການຂາດສະເຖຍລະພາບຂອງເສດຖະກິດມະຫາພາກທີ່ເພີ່ມຂຶ້ນ; (ii) ການເຕີບໂຕທີ່ບໍ່ໄດ້ສ້າງວຽກເຮັດງານທຳຫລາຍ ຄຽງຄູ່ກັບ ຄວາມບໍ່ສະເໝີພາບທີ່ເພີ່ມຂຶ້ນ; ແລະ (iii) ຄວາມບອບບາງທີ່ນັບມື້ເພີ່ມຂຶ້ນ ຕໍ່ການປ່ຽນແປງດິນຟ້າອາກາດ, ການຊຸດໂຊມທາງສິ່ງແວດລ້ອມ, ແລະ ວິກິດ (ເຊັ່ນ: ດ້ານເສດຖະກິດ, ສາທາລະນະສຸກ ແລະ ສິ່ງແວດລ້ອມ). ໃນຂະນະດຽວກັນ, ຄວາມອ່ອນແອ ຂອງການບໍລິຫານລັດ ແລະ ດ້ານສະຖາບັນຍັງສືບຕໍ່ເປັນປະເດັນທີ່ຄວນເອົາໃຈໃສ່ເຊິ່ງບໍ່ຕ່າງຈາກສະພາບ 5 ປີກ່ອນ. ສາມເສັ້ນທາງທີ່ລະບຸໃນບົດ SCD ສະບັບນີ້ ແມ່ນມີຄວາມສຳຄັນສຳລັບການສົ່ງເສີມ ການເຕີບໂຕທີ່ທົ່ວເຖິງ, ທົນທານ ແລະ ຍືນຍົງ (ຮູບພາບ 01). ເສັ້ນທາງ “ການສ້າງສະເຖຍລະພາບ” ເປັນເງື່ອນໄຂເບື້ອງຕົ້ນເພື່ອເລັ່ງການເຕີບໂຕດ້ານເສດຖະກິດ ແລະ ການປົກປ້ອງຄວາມເປັນຢູ່ທີ່ດີຂອງປະຊາຊົນ; ເສັ້ນທາງ “ແບ່ງປັນ” ແມ່ນສຳຄັນເພື່ອຍົກສູງການມີສ່ວນຮ່ວມ ແລະ ຄວາມປອງດອງສາມັກຄີຂອງສັງຄົມ; ແລະເສັ້ນທາງ “ຮັກສາໃຫ້ຍືນຍົງ” ແມ່ນສຳຄັນເພື່ອຄວາມທົນທານດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ. ເສັ້ນທາງລວມທີ່ພົວພັນກັບຫຼາຍຂະແໜງການ (cross-cutting theme) ກຳນົດຂໍ້ແນະນຳໃນການບໍລິຫານລັດ ແລະ ດ້ານສະຖາບັນໃຫ້ເຂັ້ມແຂງຂຶ້ນ ສຳລັບການຈັດຕັ້ງປະຕິບັດສາມເສັ້ນທາງດັ່ງກ່າວໃຫ້ມີປະສິດທິຜົນ.

**ເສັ້ນທາງ ”ການສ້າງສະເຖຍລະພາບ” ເນັ້ນໜັກຄວາມຮີບດ່ວນຂອງການຟື້ນຟູສະເຖຍລະພາບຂອງເສດຖະກິດມະຫາພາກ.** ການຂາດສະເຖຍລະພາບຂອງເສດຖະກິດມະຫາພາກ ໄດ້ກາຍເປັນປັດໄຈສຳຄັນທີ່ຖ່ວງດຶງຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກ ແລະ ການແບ່ງປັນຄວາມອຸດົມຮັ່ງມີຢ່າງທົ່ວເຖິງ ກໍຄືການເປັນຢູ່ຂອງປະຊາຊົນ ຍ້ອນອັດຕາເງິນເຟີ້ທີ່ສູງ, ພາວະເສດຖະກິດທີ່ທົດຖອຍ ແລະ ການລົງທຶນໃສ່ຂະແໜງສັງຄົມທີ່ຫລຸດລົງ. ລະດັບໜີ້ສິນຂອງລັດທີ່ບໍ່ຍືນຍົງ, ກຳລັງແຮງດ້ານການເງິນຂອງລັດຖະບານທີ່ຈຳກັດ, ຄັງເງິນທີ່ຫລຸດໜ້ອຍຖອຍລົງ ແລະ ຄວາມສ່ຽງຂອງຂະແໜງການເງິນທີ່ນັບມື້ເພີ່ມຂຶ້ນ ລ້ວນແຕ່ເປັນສິ່ງທ້າທາຍທີ່ເພີ່ມທະວີຂຶ້ນຢ່າງໜັກໜ່ວງກວ່າເກົ່າຍ້ອນການລະບາດຂອງພະຍາດ COVID-19 ແລະ ຊີ້ໃຫ້ເຫັນຄວາມຈຳເປັນອັນຮີບດ່ວນໃນການປະຕິຮູບ. ການສ້າງສະເຖຍລະພາບຂອງເສດຖະກິດມະຫາພາກຮຽກຮ້ອງໃຫ້ແກ້ໄຂຄວາມສ່ຽງດ້ານການເງິນ-ມະຫາພາກເຊັ່ນ: (i) ການປັບປຸງຄວາມໂປ່ງໃສ ແລະ ການຄຸ້ມຄອງໜີ້ສິນ ຜ່ານການລາຍງານໜີ້ສິນ, ການຈຳກັດການກູ້ຢືມແບບບໍ່ຜ່ອນຜັນ ແລະ ການປັບໂຄງສ້າງໜີ້ສິນ; (ii) ການສ້າງກຳລັງແຮງດ້ານການເງິນຂອງລັດຖະບານ ຫຼັກ ໆ ໂດຍການລະດົມແຫຼ່ງພາຍໃນ; ແລະ (iii) ການປະຕິຮູບສຳຄັນຂອງຂະແໜງການ ໆ ເງິນ ລວມທັງ ການຮັດແໜ້ນລະບຽບການ ແລະ ຕິດຕາມຊີ້ນຳຢ່າງຮອບຄອບ. ການປະຕິຮູບດ້ານໂຄງສ້າງຍັງຈຳເປັນເພື່ອສະໜັບສະໜູນການຟື້ນຟູດ້ານເສດຖະກິດ ໂດຍສະເພາະ ໃນຂະແໜງການທີ່ບໍ່ແມ່ນຊັບພະຍາກອນ ໃນທ່າມກາງ ຄວາມສ່ຽງ ແລະ ຄວາມບໍ່ແນ່ນອນໃນໂລກທີ່ນັບມື້ສູງຂຶ້ນ.

**ເສັ້ນທາງ “ການແບ່ງປັນ” ເນັ້ນໜັກຄວາມຈຳເປັນຂອງການເຕີບໂຕທີ່ສົມບູນ-ທົ່ວເຖິງກວ່າເກົ່າ ເຊິ່ງສາມາດສ້າງຜົນປະໂຫຍດທີ່ຫລາຍກວ່າເກົ່າສຳລັບຜູ້ທຸກຍາກ ແລະ ບອບບາງທີ່ສຸດ.** ການກະຕຸ້ນການເຕີບໂຕແບບສົມບູນ-ທົ່ວເຖິງຈະຮຽກຮ້ອງໃຫ້ມີການປັບປຸງລາຍໄດ້ແຮງງານຂອງ ຄົວເຮືອນທີ່ບອບບາງ. ອັນນີ້ຈະລວມມີການສ້າງທຶນມະນຸດ ແລະ ການສ້າງໂອກາດດ້ານການຈ້າງງານ-ວຽກເຮັດງານທຳທີ່ຫຼາຍ ແລະ ດີກວ່າເກົ່າ. ທຶນມະນຸດ ແມ່ນຊັບສິນຫຼັກຂອງປະຊາກອນ ໂດຍສະເພາະສຳລັບຜູ້ທຸກຍາກ ແລະ ຜູ້ບອບບາງທີ່ສ່ວນໃຫຍ່ບໍ່ມີຊັບສິນ. ໃນຂະນະທີ່ລະດັບການສຶກສາຂອງແຮງງານຈະຊ່ວຍເພີ່ມປະສິດທິພາບຂອງແຮງງານ ແລະ ຄ່າຈ້າງ

ຮູບພາບ 01 ຂອບ SCD




ແຫຼ່ງຂໍ້ມູນ: ພະນັກງານທະນາຄານໂລກ.

ທີ່ສູງຂຶ້ນກວ່າເກົ່າ, ແຕ່ການທີ່ແຮງງານມີສຸຂະພາບທີ່ດີຈະຊ່ວຍສ້າງຜົນຕອບແທນໄດ້ດີກວ່າເກົ່າ. ການລົງທຶນໃສ່ ການສຶກສາ ແລະ ການບໍລິການສຸຂະພາບທີ່ມີຄຸນນະພາບ ເພື່ອໃຫ້ທຸກຄົນເຂົ້າເຖິງຢ່າງເທົ່າທຽມກັນ ຈະຊ່ວຍຟື້ນຟູຈາກການສູນເສຍຜົນໄດ້ຮັບຈາກທຶນມະນຸດ ທີ່ເກີດຂຶ້ນໃນໄລຍະ COVID-19 ແລະ ສະນັ້ນຈຶ່ງຄວນວາງພື້ນຖານເພື່ອການເຕີບໂຕທີ່ສົມບູນ-ທົ່ວເຖິງ. ການສ້າງວຽກເຮັດງານທຳ ແມ່ນຂົວຕໍ່ລະຫວ່າງການເຕີບໂຕດ້ານເສດຖະກິດ ແລະ ການມີສ່ວນຮ່ວມຢ່າງທົ່ວເຖິງກັນຍ້ອນວ່າ ການມີວຽກເຮັດງານທຳເປັນຊ່ອງທາງສຳຄັນສຳລັບຫຼາຍຄົວເຮືອນ ໃນການມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກ ການເຕີບໂຕດ້ານເສດຖະກິດ. ແຮງງານລາວສ່ວນໃຫຍ່ແມ່ນຕິດວົນຢູ່ໃນວຽກທີ່ມີຄ່າຈ້າງຕ່ຳ ແລະ ຄຸນນະພາບວຽກຕ່ຳ ແລະ ເປັນຜູ້ປະກອບການອິດສະຫຼະ ຫຼື ແຮງງານພາຍໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ ໂດຍສະເພາະໃນຂະແໜງກະສິກຳ. ເພື່ອຫລຸດພົ້ນຈາກຄວາມທຸກຍາກ, ຜູ້ທຸກຍາກຕ້ອງການວຽກທີ່ມີສັກກະຍະພາບ ທີ່ນຳໄປສູ່ລາຍໄດ້ທີ່ສູງຂຶ້ນ. ການສ້າງວຽກເຮັດງານທຳໃຫ້ຫລາຍກວ່າເກົ່າ ຮຽກຮ້ອງໃຫ້ມີມາດຕະການເພື່ອປັບປຸງສະພາບແວດລ້ອມການດຳເນີນທຸລະກິດ, ພື້ນຖານໂຄງລ່າງການເຊື່ອມຕໍ່ ແລະ ຕະຫຼາດແຮງງານທີ່ຄ່ອງຕົວ ໂດຍສະເພາະເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດຈາກທ່າແຮງຂອງການເຊື່ອມໂຍງພາກພື້ນ. ສະພາບແວດລ້ອມການດຳເນີນທຸລະກິດທີ່ແນ່ນອນ-ຄາດຄະເນໄດ້, ການປະຕິຮູບດ້ານລະບຽບການສຳຄັນ ແລະ ຂະແໜງການເງິນທີ່ມີສະເຖຍລະພາບ ແລະ ທົ່ວເຖິງແມ່ນມີຄວາມສຳຄັນເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ຂະແໜງການເອກະຊົນທີ່ມີການແຂ່ງຂັນ ແລະ ສ້າງວຽກເຮັດງານທຳ. ໃນໄລຍະສັ້ນ, ແຮງງານ ແລະ ຫົວໜ່ວຍທຸລະກິດຕ້ອງການ ໆ ສະໜັບສະໜູນເພື່ອຊ່ວຍເຂົາເຈົ້າໃນການຟື້ນຟູຈາກການສູນເສຍຍ້ອນ COVID-19 ແລະ ໃຫ້ຄວາມຮູ້ ແລະ ທັກສະສີມືທີ່ຈຳເປັນ ພາຍຫຼັງຍຸກ ໂຄວິດ. ຍ້ອນວ່າຊ່ອງຫວ່າງດ້ານບົດບາດຍິງຊາຍໃນ ສປປ ລາວແມ່ນກວ້າງສົມຄວນ ໂດຍສະເພາະ ດ້ານສຸຂະພາບແມ່ ແລະ ສຸຂະພາບການຈະເລີນພັນ ແລະ ການມີສ່ວນຮ່ວມໃນຕະຫຼາດແຮງງານ, ການຫລຸດຜ່ອນຊ່ອງວ່າງດ້ານບົດບາດຍິງຊາຍ ຈຶ່ງເປັນອົງປະກອບໜຶ່ງຂອງ ເສັ້ນທາງນີ້.

**ເສັ້ນທາງ ຮັກສາຄວາມຍືນຍົງ ເລັ່ງເທັນ ການສົ່ງເສີມການເຕີບໂຕສີຂຽວ ແລະ ການປັບປຸງຄວາມທົນທານຕໍ່ວິກິດ.** ການພັດທະນາສີຂຽວ ແລະ ຢ່າງຍືນຍົງຮຽກຮ້ອງໃຫ້ມີສະຖາບັນ ແລະ ຂະບວນການທີ່ປັບປຸງໃຫ້ດີຂຶ້ນກວ່າເກົ່າ ເພື່ອຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຍືນຍົງ ແລະ ຮັບມືກັບການປ່ຽນແປງດິນຟ້າອາກາດ. ນອກຈາກນັ້ນກໍຍັງຈຳເປັນຕ້ອງຮັກສາ ພະລັງງານທີ່ສະອາດ, ສະຖຽນ ແລະ ໃນລາຄາທີ່ຈັບຕ້ອງໄດ້. ເພື່ອປົກປ້ອງຊີວິດການເປັນຢູ່ຂອງບັນດາຄົວເຮືອນ ຈາກຄວາມສ່ຽງດ້ານໄພພິບັດ ແລະ ຜົນກະທົບພາຍນອກ ແມ່ນຈຳເປັນຕ້ອງມີມາດຕະການເພື່ອຫລຸດຜ່ອນຄວາມສ່ຽງຈາກໄພພິບັດດ້ານສິ່ງແວດລ້ອມ ແລະ ປັບປຸງປະສິດທິພາບ ແລະ ຄວາມທົນທານຂອງຂະແໜງການກະສິກຳ. ໃນເວລາດຽວກັນ, ລະບົບການປ້ອງກັນທາງສັງຄົມທີ່ສາ

ມາດປັບຕົວໄດ້ ແລະ ລະບົບການເງິນທີ່ທົ່ວເຖິງ ແມ່ນມີຄວາມສຳຄັນເພື່ອປົກປ້ອງຊີວິດການເປັນຢູ່ຈາກຜົນກະທົບຈາກວິກິດທີ່ສູງຂຶ້ນ. ກໍລະນີຜົນກະທົບຂອງການລະບາດຂອງພະຍາດ COVID-19 ແມ່ນເປັນຕົວຢ່າງໄດ້ດີ.

**ບັນຫາທີ່ພົວພັນກັບຫຼາຍຂະແໜງການ ແນໃສ່ຮັບປະກັນສ້າງສະພາບແວດລ້ອມການບໍລິຫານຂອງລັດ ແລະ ສະຖາບັນ ໃຫ້ສະໜັບສະໜູນ ການຈັດຕັ້ງປະຕິບັດນະໂຍບາຍຢ່າງມີຫມາກຜົນ.** ການບໍລິຫານລັດ ແລະ ສະຖາບັນທີ່ດີມີຄວາມສຳຄັນເພື່ອສະໜັບສະໜູນ ສະເຖຍລະພາບຂອງເສດຖະກິດມະຫາພາກ, ການພັດທະນາພາກເອກະຊົນ, ການສະໜອງການບໍລິການຂອງລັດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ. ສະນັ້ນ, ການສ້າງຄວາມເຂັ້ມແຂງດ້ານການບໍລິຫານລັດ ແລະ ສະຖາບັນໃຫ້ເຂັ້ມແຂງ ຈຶ່ງເປັນສິ່ງທ້າທາຍທີ່ພົວພັນກັບຫຼາຍຂະແໜງການທີ່ກະທົບໃສ່ຄວາມຄືບໜ້າໃນແຕ່ລະເສັ້ນທາງທີ່ໄດ້ນຳສະເໜີມາຂ້າງເທິງ. ສະເຖຍລະພາບຂອງເສດຖະກິດມະຫາພາກ (ການສ້າງສະເຖຍລະພາຍ) ຖືກຖ່ວງດຶງໂດຍ ສະຖາບັນ, ລະບົບ ແລະ ຂະບວນການທີ່ອ່ອນແອ. ການຄຸ້ມຄອງພາຍໃນທີ່ຍັງບໍ່ເຂັ້ມແຂງ, ຂອບດ້ານກົດໝາຍທີ່ບໍ່ຊັດເຈນ, ການບັງຄັບໃຊ້ລະບຽບການທີ່ຍັງບໍ່ໄດ້ດີ ແລະ ການຂາດຄວາມດຸ່ນດ່ຽງ ນຳໄປສູ່ການຈັດສັນຊັບພະຍາກອນ ທີ່ບໍ່ນຳສູ່ໝາກຜົນທີ່ສູງສຸດ. ການເຕີບໂຕແບບສົມບູນ-ທົ່ວເຖິງ (ການແບ່ງປັນ) ຕ້ອງບົນພື້ນຖານຄວາມເປັນເຈົ້າການ-ຄວາມຮັບຜິດຊອບ ເຊິ່ງຜູ້ມີສ່ວນຮ່ວມສາມາດປະກອບສ່ວນຄວາມເຫັນໄດ້ຫຼາຍກວ່າເກົ່າ ແລະ ມີສ່ວນຮ່ວມໃນການຕັດສິນໃຈ, ແລະ ສິດຂອງພົນລະເມືອງ ແລະ ຫົວໜ່ວຍທຸລະກິດຄວນຖືກປົກປ້ອງດ້ວຍ ອົງການໄອຍະການເອກະລາດ. ສະຖາບັນດ້ານກົດໝາຍ ແລະ ກົນໄກຕະຫຼາດທີ່ເຂັ້ມແຂງ ແມ່ນມີຄວາມຈຳເປັນເພື່ອສະໜັບສະໜູນບົດບາດຂອງພາກເອກະຊົນໃນການສົ່ງເສີມການເຕີບໂຕ ແລະ ການສ້າງວຽກເຮັດງານທຳ, ການແຂ່ງຂັນ ແລະ ປະສິດທິພາບ. ການແກ້ໄຂ ການສໍ້ລາດບັງຫຼວງ ຈະປະກອບສ່ວນຕໍ່ ພາກລັດໃຫ້ມີຄວາມເປັນເຈົ້າການ-ຄວາມຮັບຜິດຊອບກວ່າເກົ່າ. ຮູບແບບການເຕີບໂຕທີ່ຍືນຍົງກວ່າເກົ່າ (ເສັ້ນທາງ ການຮັກສາໃຫ້ຍືນຍົງ) ຮຽກຮ້ອງໃຫ້ມີການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງເຂັ້ມແຂງໜັກແໜ້ນ ເຊິ່ງຮຽກຮ້ອງໃຫ້ມີການບັງຄັບໃຊ້ລະບຽບການ ແລະ ການປະສານງານລະຫວ່າງສະຖາບັນຕ່າງ ໆ ໃຫ້ດີຂຶ້ນກວ່າເກົ່າ ແລະ ການມີສ່ວນຮ່ວມຂອງຜູ້ກ່ຽວຂ້ອງຫຼາຍຂຶ້ນກວ່າເກົ່າ. ສຸດທ້າຍ, ການປັບປຸງຄຸນນະພາບດ້ານສະຖາບັນ ແລະ ປະສິດທິພາບຂອງການບໍລິການຂອງພາກລັດ ຈຶ່ງເປັນກະແຈສຳຄັນເພື່ອບັນລຸຄວາມຄືບໜ້າໃນທຸກ ໆ ຂົງເຂດບູລິມະສິດເສັ້ນທາງທີ່ໄດ້ລະບຸມານັ້ນ.

**ການປະເມີນຄືນ ສິ່ງທ້າທາຍ ແລະ ໂອກາດທີ່ ສປປ ລາວ ພວມປະເຊີນ ໄດ້ນຳໄປສູ່ການລະບຸ 3 ເປົ້າໝາຍຂັ້ນສູງ (High-Level Outcomes ຫຼື HLO) ແລະ 16 ຈຸດປະສົງການພັດທະນາ (development objectives).** ບົດ SCD ຄັ້ງນີ້ໄດ້ປະເມີນຜົນຄືນ ອຸປະສັກຫຼັກຕໍ່ການຢຸດຕິຄວາມທຸກຍາກຮ້າຍແຮງ ແລະ ສົ່ງເສີມການແບ່ງປັນຄວາມອຸດົມຮັ່ງມີໃຫ້ທົ່ວເຖິງ ໃນ ສປປ ລາວ. ການຮັກສາລະດັບໜີ້ສິນລັດໃຫ້ຍືນຍົງ, ເພີ່ມກຳລັງແຮງດ້ານການເງິນພາກລັດ ແລະ ຂະແໜງການເງິນທີ່ມີສະເຖຍລະພາບ ແມ່ນມີຄວາມສຳຄັນເພື່ອຮັບປະກັນການປົກປ້ອງມາດຕະຖານການດຳລົງຊີວິດຈາກ ຄວາມສ່ຽງເຊັ່ນ ອັດຕາເງິນເຟີ້ສູງ, ເສດຖະກິດຖົດຖອຍ ແລະ ການຫລຸດລົງຂອງການລົງທຶນໃສ່ຂະແໜງສັງຄົມ (HLO-1) (ຮູບພາບ 02). ພາກເອກະຊົນທີ່ມີຄວາມຫຼາກຫຼາຍ ແລະ ການປັບປຸງພື້ນຖານໂຄງລ່າງການເຊື່ອມໂຍງ ແມ່ນມີຄວາມສຳຄັນເພື່ອກະຕຸ້ນການສ້າງວຽກເຮັດງານທຳ ໃນຂະນະທີ່ ຕະຫຼາດແຮງງານມີການເຄື່ອນໄຫວທີ່ດີ, ເດັກເຕ້ຍກວ່າມາດຕະຖານຫລຸດລົງ, ຍົກລະດັບໝາກຜົນດ້ານການຮຽນ ແລະ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງເທົ່າທຽມ ລ້ວນແລ້ວແຕ່ມີຄວາມສຳຄັນຕໍ່ການສ້າງຄວາມພ້ອມໃນການເຮັດວຽກ. ຄວາມຄືບໜ້າໃນຂົງເຂດເຫຼົ່ານີ້ ຈະປະກອບສ່ວນຕໍ່ການປັບປຸງ ລາຍໄດ້ແຮງງານຂອງຄົວເຮືອນທີ່ບອບບາງ (HLO-2). ສຸດທ້າຍ ການປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ, ການລົງມືແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ການຫັນປ່ຽນເປັນຕົວເມືອງທີ່ມີການຄຸ້ມຄອງເປັນຢ່າງດີ ຈະສາມາດສະໜັບສະໜູນ ການເຕີບໂຕສີຂຽວ ໃນຂະນະທີ່ມີ ການປະກັນສັງຄົມທີ່ຄົບຖ້ວນກະທັດຮັດ, ການປັບປຸງການມີສ່ວນຮ່ວມດ້ານການເງິນ ແລະ ການປັບປຸງສະມັດຕະພາບການຜະລິດກະສິກຳ ຈະສະໜັບສະໜູນຊີວິດການເປັນຢູ່ທີ່ປັບຕົວຜ່ານວິກິດໄປໄດ້. ທັງໝົດ ທີ່ກ່າວມານັ້ນ ຈະຊ່ວຍໃຫ້ປະຊາຊົນສາມາດປັບຕົວເອງເພື່ອຫລຸດພົ້ນຈາກວິກິດການ (HLO-3). ຍ້ອນ ເສັ້ນທາງ

ທີ່ພົວພັນກັບຫຼາຍຂະແໜງການ ມີຄວາມສຳຄັນ ຈຶ່ງໄດ້ມີຈຸດປະສົງສະເພາະໃນກອບຂໍ້ແນະນຳໃນບົດສະບັບນີ້ວ່າ: ສ້າງຄວາມເຂັ້ມແຂງດ້ານການບໍລິຫານລັດ ແລະ ສະຖາບັນ.

**ການຈັດບູລິມະສິດ ບັນດາຈຸດປະສົງການພັດທະນາ ແມ່ນສອດຄ່ອງກັບ ຂໍ້ມູນຫຼັກຖານໃໝ່ໆ ທີ່ຈະເປັນບ່ອນອີງໃນການສ້າງ ຂອບການເປັນຄູ່ຮ່ວມມືກັບປະເທດ (Country Partnership Framework ຫຼື CPF) ໄລຍະຕໍ່ໄປທີ່ຈະມາເຖິງນີ້.** ບົດ SCD ສະບັບນີ້ ນຳສະເໜີ ບັນດາຈຸດປະສົງການພັດທະນາທີ່ກ່ຽວຂ້ອງກັບການບັນລຸ ສອງເປົ້າໝາຍຂອງກຸ່ມທະນາຄານໂລກ (World Bank Group ຫຼື WBG) ແຕ່ມີຄວາມຈຳເປັນທີ່ຕ້ອງຈັດບູລິມະສິດຈຸດປະສົງດັ່ງກ່າວ. ບົດ SCD ຄັ້ງນີ້ ໄດ້ເບິ່ງຄືນບູລິມະສິດທີ່ຖືກກຳນົດໃນບົດ SCD ເທື່ອກ່ອນໃນປີ 2017 ແລະ ໄດ້ປັບປຸງບົດຫຼາສຸດອີງຕາມ ຫຼັກຖານໃໝ່ໆ ແລະ ສະພາບການໃໝ່ໆທີ່ເກີດຂຶ້ນໃນປະເທດ. ການຈັດລຽງບູລິມະສິດໃນຄັ້ງນີ້ ແມ່ນໄດ້ນຳໃຊ້ 3 ບັນທັດຖານ. ບັນທັດຖານ-ເງື່ອນໄຂທຳອິດໃນການເລືອກຈຸດປະສົງແມ່ນ ລະດັບໝາກຜົນຕໍ່ການຫລຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ. ເງື່ອນໄຂນີ້ແມ່ນໄດ້ຮັບການຈັດອັນດັບຄວາມສຳຄັນສູງທີ່ສຸດ. ບັນທັດຖານທີສອງ ໃຫ້ນ້ຳໜັກແກ່ຂົງເຂດວຽກງານທີ່ສາມາດສ້າງຄວາມເຊື່ອມໂຍງດ້ານຜົນໄດ້ຮັບລະຫວ່າງຫລາຍຂະແໜງການ ຫຼື ເປັນເງື່ອນໄຂເບື້ອງຕົ້ນສຳລັບການບັນລຸເປົ້າໝາຍອື່ນໆ. ຂໍ້ສຸດທ້າຍ ແມ່ນໄລຍະເວລາທີ່ຈະເຫັນຜົນກະທົບ ເຊິ່ງເປັນອີກປັດໄຈໜຶ່ງທີ່ສຳຄັນເວລາຈັດບູລິມະສິດ ໂດຍຈະຄຸ້ມຄ່ຽງ ວຽກງານທີ່ຈະສ້າງຜົນໄດ້ຮັບໃນໄລຍະສັ້ນ ແລະ ໄລຍະຍາວ. ບົດນີ້ບໍ່ໄດ້ນຳໃຊ້ບັນທັດຖານດ້ານຄວາມເປັນໄປໄດ້ຂອງການຄັດເລືອກມາດຕະການ (Feasibility) ຍ້ອນວ່າ ການປະເມີນຄວາມເປັນໄປໄດ້ໃນທາງການເມືອງ ແລະ ຄວາມອາດສາມາດໃນການຈັດຕັ້ງປະຕິບັດ ແມ່ນຄວນດຳເນີນໃນເວລາກະກຽມ CPF.

ຮູບພາບ 02 SCD ໝາກຜົນຂັ້ນສູງ ແລະ ຈຸດປະສົງການພັດທະນາ




ແຫຼ່ງຂໍ້ມູນ: ພະນັກງານທະນາຄານໂລກ.

**ເສັ້ນທາງ ການສ້າງສະເຖຍລະພາບ ໄດ້ຍົກວຽກງານ ການຮັກສາລະດັບໜີ້ສິນສາທາລະນະໃຫ້ຍືນຍົງແລະ ການເພີ່ມກຳລັງແຮງດ້ານການເງິນພາກລັດ ໃຫ້ເປັນບູລິມະສິດສູງສຸດທີ່ຕ້ອງໄດ້ຮັບການເອົາໃຈໃສ່ໂດຍດ່ວນ.** ການຮັກສາລະດັບໜີ້ສິນໃຫ້ຍືນຍົງໄດ້ສ້າງຄວາມກັງວົນຕັ້ງແຕ່ປີ 2017 ເປັນຕົ້ນມາ, ໂດຍການແບກຫາມ ພາລະໜີ້ສິນທີ່ເພີ່ມຂຶ້ນຢ່າງຫລວງລາຍໄດ້ເປັນໄພຂົ່ມຂູ່ຕໍ່ສະເຖຍລະພາບຂອງເສດຖະກິດມະຫາພາກ ແລະ ບັ່ນທອນກຳລັງແຮງດ້ານການເງິນພາກລັດທີ່ລົງທຶນໃສ່ວຽກງານການພັດທະນາ. ຖ້າຍັງບໍ່ຖືກແກ້ໄຂ, ຄວາມບໍ່ໝັ້ນຄົງຂອງເສດຖະກິດມະຫາພາກ ຈະມີຜົນກະທົບຢ່າງມະຫາສານຕໍ່ ກຳລັງການຊື້ຂອງຄົວເຮືອນ ຍ້ອນເງິນກີບທີ່ອ່ອນຄ່າ ແລະ ອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນ. ໃນໄລຍະການລະບາດຂອງພະຍາດ COVID-19, ຫຼາຍກວ່າເຄິ່ງໜຶ່ງຂອງຄົວເຮືອນທີ່ຖືກສຳຫຼວດ ໄດ້ລາຍງານວ່າ ເງິນເຟີ້ເປັນບັນຫາທີ່ສຳຄັນທີ່ສຸດ ທີ່ຊຸມຊົນຕົນປະເຊີນຢູ່ ແລະ ພາວະເງິນເຟີ້ກໍເປັນບັນຫາທີ່ປະຊາຊົນເຊື່ອວ່າ ລັດຖະບານຄວນຈະແກ້ໄຂກ່ອນອື່ນໝົດ. ໂດຍການຈຳກັດກຳລັງແຮງດ້ານການເງິນຂອງລັດ ແລະ ການຖ່ວງດຶງການລົງທຶນຂອງພາກເອກະຊົນ, ຄວາມບໍ່ໝັ້ນຄົງຂອງເສດຖະກິດມະຫາພາກ ຍັງຈະສ້າງຜົນເສຍຫາຍຕໍ່ ການເຕີບໂຕໄລຍະຍາວ ແລະ ການສ້າງວຽກເຮັດງານທຳ. ການເພີ່ມກຳລັງແຮງດ້ານການເງິນພາກລັດ ເປັນບູລິມະສິດຕົ້ນຕໍ ຍ້ອນວ່າ ການເກັບພາສີອາກອນຊ້ຳພັດຫລຸດລົງ ໃນຂະນະທີ່ມີຄວາມຕ້ອງການລາຍຈ່າຍພາກລັດທີ່ສູງຂຶ້ນໃນການລົງທຶນໃສ່ທຶນມະນຸດ. ກຳລັງແຮງດ້ານການເງິນທີ່ຈຳກັດ ກໍໄດ້ຈຳກັດຄວາມສາມາດຂອງລັດຖະບານໃນການຂະຫຍາຍການໃຊ້ຈ່າຍເຂົ້າໃສ່ ການສຶກສາ, ສາທາລະນະສຸກ ແລະ ການປະກັນສັງຄົມ ບໍ່ວ່າຈະຢູ່ໃນໄລຍະຂອງການລະບາດພະຍາດ COVID-19 ກໍຕາມ ແມ່ນຈະເຮັດໃຫ້ຫຼາຍຄົນຕົກຢູ່ໃນຄວາມສ່ຽງທີ່ຈະກັບໄປທຸກຍາກຄືນຄືເກົ່າ.

**ຕາຕະລາງ 01: ການຈັດບູລິມະສິດ**

| ສູງສຸດ | ສູງ | ປານກາງ |
|---|---|---|
| ຮັກສາລະດັບໜີ້ສິນໃຫ້ຍືນຍົງ | ຂະແໜງການເງິນມີສະເຖຍລະພາບ | ຕະຫຼາດແຮງງານທີ່ມີການເຄື່ອນໄຫວທີ່ດີ |
| ກຳລັງແຮງດ້ານການເງິນພາກລັດເພີ່ມຂຶ້ນ | ປັບປຸງພື້ນຖານໂຄງລ່າງ ການເຊື່ອມໂຍງ | ການຫັນເປັນຕົວເມືອງທີ່ມີການຄຸ້ມຄອງເປັນຢ່າງດີ |
| ພາກເອກະຊົນມີຄວາມຫຼາກຫຼາຍ | ເດັກນ້ອຍເຕ້ຍກວ່າມາດຕະຖານລຸດລົງ | ປັບປຸງການມີສ່ວນຮ່ວມດ້ານການເງິນ |
| ຍົກລະດັບໝາກຜົນດ້ານການຮຽນ | ການເຂົ້າເຖິງການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງເທົ່າທຽມ | |
| ປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ | ການລົງມືແກ້ໄຂຄວາມສ່ຽງເກີດວິກິດການ ແລະ ການປ່ຽນແປງດິນຟ້າອາກາດ | |
| ສະມັດຕະພາບການຜະລິດກະສິກຳສູງຂຶ້ນ | ການປະກັນສັງຄົມທີ່ຄົບຖ້ວນ | |
| ສ້າງຄວາມເຂັ້ມແຂງດ້ານການບໍລິຫານລັດ ແລະ ສະຖາບັນ | | |

ແຫຼ່ງຂໍ້ມູນ: ພະນັກງານທະນາຄານໂລກ

**ພາກເອກະຊົນທີ່ມີຄວາມຫຼາກຫຼາຍ ແລະ ການຍົກລະດັບໝາກຜົນດ້ານການຮຽນ ແມ່ນຖືກລະບຸໄວ້ເປັນບູລິມະສິດສູງສຸດ ພາຍໃຕ້ ເສັ້ນທາງ ການແບ່ງປັນ ຍ້ອນມັນມີຄວາມສຳຄັນທີ່ຈະຕ້ອງໄດ້ປິ່ນຄືນຈາກຮູບແບບການເຕີບໂຕທີ່ບໍ່ສ້າງວຽກເຮັດງານທຳຫລາຍ.** ຂໍ້ມູນຫຼັກຖານໃນຫວ່າງບໍ່ດົນມານີ້ ໄດ້ຢັ້ງຢືນວ່າ ການເຕີບໂຕໃນຫວ່າງບໍ່ດົນມານີ້ ແມ່ນບໍ່ໄດ້ສ້າງວຽກເຮັດງານທຳ ເຊິ່ງເປັນປະກົດການທີ່ບໍ່ໄດ້ບັນທຶກໄວ້ໃນ SCD ສະບັບປີ 2017 ແລະ ໄດ້ຮ້າຍແຮງລົງຍ້ອນການລະບາດຂອງພະຍາດ COVID-19. ການເຕີບໂຕທີ່ບໍ່ໄດ້ສ້າງວຽກເຮັດງານທຳ ໄດ້ ຖ່ວງດຶງ ການຫລຸດຜ່ອນຄວາມທຸກຍາກໃຫ້ຊ້າລົງ ແລະ ເພີ່ມຄວາມບໍ່ສະເໝີພາບໃນຊຸມປີຫລັງ

ມານີ້. ສະນັ້ນ, ການພັດທະນາຂະແໜງທີ່ບໍ່ແມ່ນຂະແໜງຊັບພະຍາກອນ ໃຫ້ເຂັ້ມແຂງ ຈຶ່ງສຳຄັນຫລາຍ ເພື່ອສ້າງວຽກເຮັດງານທຳທີ່ພຽງພໍ. ຍ້ອນວ່າຄວາມຄືບໜ້າດ້ານການສຶກສາໄດ້ຫຼ້າຊ້າລົງໃນຊຸມປີຜ່ານມາ ແລະ ທີ່ຮ້າຍແຮງໄປຕື່ມອີກ ຍ້ອນການສູນເສຍຜົນການຮຽນຈາກການລະບາດຂອງພະຍາດ COVID-19 ຈຶ່ງຈຳເປັນຕ້ອງຍົກລະດັບໝາກຜົນດ້ານການຮຽນ ເພື່ອສະໜັບສະໜູນການຟື້ນຟູດ້ານການຮຽນ ແລະ ຮັບປະກັນວ່າຜູ້ອອກແຮງງານໃນອະນາຄົດຈະໄດ້ມີທັກສະສີມືຕາມຕ້ອງການ ແລະ ສົ່ງເສີມແນວຄິດຄວາມເປັນຜູ້ປະກອບການ. ເຖິງແມ່ນວ່າອັດຕາເດັກນ້ອຍເຕ້ຍກວ່າມາດຕະຖານຈະຫລຸດລົງຢ່າງຫຼວງຫຼາຍລະຫວ່າງປີ 2011 ເຖິງ 2017, ແຕ່ ບັນຫາດັ່ງກ່າວກໍຍັງແຜ່ຫຼາຍ ແລະ ຫຼັກຖານໃນຫວ່າງບໍ່ດົນມານີ້ສະແດງໃຫ້ຮູ້ວ່າ ບັນຫາດັ່ງກ່າວອາດຮ້າຍແຮງຂຶ້ນ ຕັ້ງແຕ່ປີ 2017 ເປັນຕົ້ນມາ. ການເຂົ້າເຖິງການບໍລິການສາທາລະນະສຸກທີ່ມີຄຸນນະພາບຢ່າງສະເໝີພາບນັ້ນ ສືບຕໍ່ມີຄວາມສຳຄັນເພື່ອຮັບປະກັນ ແຮງງານທີ່ມີສຸຂະພາບດີ ແລະ ມີສະມັດຕະພາບ-ສັກກະຍະພາບ. ພື້ນຖານໂຄງລ່າງການເຊື່ອມໂຍງ (ປະກອບດ້ວຍການຂົນສົ່ງ ແລະ ດີຈີຕອນດ້ານຕ່າງ ໆ ) ຍັງສືບຕໍ່ສຳຄັນຕໍ່ການສະໜັບສະໜູນການພັດທະນາໃນແຕ່ລະພື້ນທີ່ຢ່າງທົ່ວເຖິງ ແລະ ເພື່ອຮັບປະກັນການເຂົ້າເຖິງຕະຫຼາດ ແລະ ການບໍລິການພາກລັດຢ່າງເທົ່າທຽມໃນຂອບເຂດທົ່ວປະເທດ ໂດຍສະເພາະ ເມື່ອເສັ້ນທາງລົດໄຟລາວ-ຈີນນັ້ນ ຈະເຂົ້າເຖິງທາງພາກເໜືອຂອງປະເທດເທົ່ານັ້ນ.

**ການປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສະມັດຕະພາບການຜະລິດກະສິກຳສູງຂຶ້ນ ແມ່ນຖືກລະບຸເປັນບູລິມະສິດສູງສຸດ ພາຍໃຕ້ ເສັ້ນທາງ ການຮັກສາໃຫ້ຍືນຍົງ.** ເນື່ອງຈາກວ່າຊີວິດການເປັນຢູ່ຂອງກຸ່ມຄົນທີ່ທຸກຍາກທີ່ສຸດ ແລະ ບອບບາງທີ່ສຸດນັ້ນ ແມ່ນເອື່ອຍອີງ ຊັບພະຍາກອນທຳມະຊາດ ແລະ ກະສິກຳຢ່າງຫຼວງຫຼາຍ, ການປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ ຈຶ່ງຍັງມີຄວາມສຳຄັນເພື່ອຮັບປະກັນໃຫ້ມີການນຳໃຊ້ຊັບພະຍາກອນໃນທາງທີ່ຍືນຍົງ ຄຽງຄູ່ກັບຜົນປະໂຫຍດຢ່າງພຽງພໍມາໃຫ້ແກ່ປະຊາກອນ. ກະສິກຳໄດ້ເປັນປັດໄຈຂັບເຄື່ອນຫຼັກ ໆ ຂອງການຫລຸດຜ່ອນຄວາມທຸກຍາກ. ຂະແໜງການດັ່ງກ່າວຍັງເປັນສິ່ງ ຮອງຮັບສຳລັບບັນດາຄົວເຮືອນໃນໄລຍະວິກິດການຕ່າງ ໆ ເຊັ່ນວິກິດການ COVID-19. ສະນັ້ນ ສະມັດຕະພາບການຜະລິດກະສິກຳ ແລະ ຄວາມທົນທານຈຶ່ງເໝາະສົມທີ່ຈະຈັດໃຫ້ເປັນບູລິມະສິດສູງສຸດ. ການຮັບມືກັບຄວາມສ່ຽງດ້ານໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ຈຶ່ງນັບມື້ມີຄວາມສຳຄັນຫຼາຍຂຶ້ນ ແລະ ຮຽກຮ້ອງໃຫ້ມີຄວາມພະຍາຍາມຮ່ວມກັນເພື່ອເຊື່ອມສານ ປະເດັນປ່ຽນແປງດິນຟ້າອາກາດເຂົ້າໃນນະໂຍບາຍຂອງຂະແໜງການ. ການປະກັນສັງຄົມທີ່ຄົບຖ້ວນກະທັດຮັດກໍຍັງມີຄວາມຈຳເປັນເພື່ອປົກປ້ອງປະຊາຊົນຈາກວິກິດການ-ຜົນກະທົບທີ່ຕາມມາໄລຍະຍາວ ຍ້ອນການລະບາດຂອງພະຍາດ, ຄວາມບໍ່ໝັ້ນຄົງຂອງມະຫາພາກ ແລະ ວິກິດການທີ່ຕິດພັນກັບສະພາບດິນຟ້າອາກາດ ແລະ ສະພາບອາກາດ. ແຕ່ວ່າ, ຈະບໍ່ເປັນວຽກງານທີ່ງ່າຍດາຍເລີຍຍ້ອນ ລະບົບປະກັນສັງຄົມໃນ ສປປ ລາວ ຍັງອ່ອນດ້ອຍ ແລະ ລະດັບຄວາມສ່ຽງທີ່ເພີ່ມຂຶ້ນ. ດ້ວຍເຫດດັ່ງກ່າວນັ້ນຈຶ່ງໄດ້ ຍົກລະດັບຈຸດປະສົງດັ່ງກ່າວມາເປັນ ບູລິມະສິດສູງສຸດ ເມື່ອສົມທຽບໃສ່ SCD ຄັ້ງກ່ອນ.

